ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 043 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 30 APR 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງອຸປະກອນໄອທີ (Battery ໃສ່ Smart APC UPS 160Kva) .

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ແລະ ສົ່ງເອກະສານລາຄາມາທີ່ ພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຕ່າງປະເທດລາວມະຫາຊົນ ສຳນັກງານໃຫຍ່ ຊ້າສຸດບໍ່ໃຫ້ກາຍ ວັນທີ: 20/05/2020 ເວລາ 09:00 ໂມງ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ C ນຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຕາມລາຍລະອຽດລຸ່ມນີ້ :

Technical Specifications

| ລ.ດ | ລາຍການ | ລາຍລະອຽດສະເປັກ | ຈຳນວນ |
|---|---|---|---|
| 1 | APC Symmetra PX 9Ah Battery Unit, High Performance Environmental<br><br>Pxd0026A | - Maximum Height 159MM, 15.9Cm<br>- Maximum Width 107MM, 10.7CM<br>- Maximum Depth 700MM, 70.0CM<br>- Net Weight 26.2KG<br>- Shipping Weight 27.0KG<br>- Shipping Height 180MM,18.0CM<br>- Shipping Width 150MM,15.0CM<br>- Shipping Depth 810MM,81.0CM<br>- Operating Temperature 18-27 $^0C$<br>- Operating Relative Humidity 0-95%<br>- Operating Elevation 0-999.9meters<br>- Storage Temperature -15-40$^0C$<br>- Storage Relative Humidity 0-95%<br>- Storage Elevation 0-4500meters | SYBTU2-PLP<br>100 ຊຸດ |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້.**

1. **<u>ຊອງເອກະສານປະກອບມີ:</u>**
   - ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີປະຈຸບັນ, ໃບຢັ້ງຢືນເປັນຕົວແທນຈຳໜ່າຍອຸປະກອນໄອທີ ຫຼື ມີໃບຢັ້ງຢືນເຄື່ອງໄອທີ ລະບຸປີ, ປະເທດທີຜະລິດອຸປະກອນໄອທີ(SERIES) ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນໄອທີດັ່ງກ່າວໃຫ້ພາກສ່ວນອື່ນ, ມີປະສົບການຜົນງານ 03 ປີ ຂຶ້ນໄປ ແລະ ມີວິຊາການບໍລິການຫຼັງການຂາຍ.
   - ກຳນົດຢື່ນຊອງມາດຕະຖານເຕັກນິກດ້ານໄອທີ ຈະປິດຮັບວັນທີ 15/05/2020 ເວລາ 09:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.
2. **<u>ຊອງໃບສະເໜີລາຄາ</u>** (ຕ້ອງເປັນສະກຸນເງິນກີບລວມອາກອນ).

- ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າທັງໝົດໃຫ້ຄົບຖ້ວນ.
- ໃນມື້ເປີດຊອງປະມູນແຈ້ງໃຫ້ ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມ ສ່ວນວັນ ແລະ ເວລາຈະແຈ້ງຕາມພາຍຫລັງ.

I. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ທີ່ຊະນະການປະມູນ, ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- ງວດທີ1: ຊຳລະ 90% ຂອງມູນຄ່າ ພາຍຫລັງໄດ້ຮັບເຄື່ອງ ແລະ ຕິດຕັ້ງເຄື່ອງສຳເລັດ.
- ງວດທີ2:ຊຳລະ10% ຂອງມູນຄ່າທັງໝົດພາຍຫຼັງຄົບກຳນົດຄ້ຳປະກັນຕະຫຼອດອາຍຸຂອງສັນຍາ ຫຼື ສະມາດປະກອບໜັງສືຄ້ຳປະກັນຈາກທະນາຄານ ຫຼື ສະຖາບັນການເງິນໃຫ້ ທຄຕລ ຈົນກວ່າຈະໝົດໄລຍະເວລາຄ້ຳປະກັນ.

❖ **<u>ໝາຍເຫດ:</u>**

1. ຜູ້ແຂ່ງຂັນປະມູນຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ຫຼື ໜັງສືຄ້ຳປະກັນທີ່ອອກໂດຍທະນາຄານມາໃຫ້ ທຄຕລ ໃນມື້ທີ່ນຳຊອງສະເໜີລາຄາມາຍື່ນ. ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເງິນຄ້ຳປະກັນດັ່ງກ່າວຄືນ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາຕາມກຳນົດ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ຜູ້ຈັດຊື້-ຈັດຈ້າງໃນມູນຄ່າເທົ່າກັບ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ສຸພັກ ຖິ່ນໄຊພອນ